# ບັ້ນທີ IV

## ອານາຈັກລາວຫນອງແສ ຫລື ນ່ານເຈົ້າ

ຫນອງແສ ເປັນຫນອງອັນກວ້າງໃຫຍ່ ຕັ້ງຢູ່ທາງທິດຕາເວັນອອກແມ່ນ້ຳຂອງ ໃນເຂດແຂວງມີນທີນຢູນານ ຂອງຈີນທຸກວັນນີ້. ແຕ່ບູຮານເຮົາເອີ້ນຫນອງນີ້ວ່າ ຫນອງແສ ຫລືຫນອງກະແສແສນຍ່ານ, ຈີນເອີ້ນວ່າ ຕາລີຟູ.

ໃນສມັຍນະຄອນເພງາຍ ຕົກເປັນເມືອງຂຶ້ນຂອງຈີນນັ້ນ ຄົນຊາດລາວສ່ວນຫລາຍ ໄດ້ພາກັນອົພຍົບລົງມາຕັ້ງບ້ານເຮືອນຢູ່ເລາະລຽບຫນອງແສນີ້ ພໍດີໃນສມັຍນັ້ນ ພວກຈີນໄດ້ແຕກກັນອອກເປັນ 3 ພວກ ຄື: ໂຈໂສ ພວກນຶ່ງ, ເລົ່າປີ່ ພວກນຶ່ງ, ຊຸນກວານ ພວກນຶ່ງ. ອາໄສເຫດທີ່ພວກຈີນເກີດແຕກກັນ ແລະມົວເມົາເລວກັນຢູ່ນີ້ ພວກລາວຈຶ່ງມີໂອກາດໄດ້ຕັ້ງຕົວ ແລະສ້າງເມືອງໃຫຍ່ຂຶ້ນໄດ້ເຖິງ 6 ເມືອງ ຄື:

| | |
|---|---|
| 1. ເມືອງມົ້ງຊຸຍ | (ເຫັນຈະແມ່ນ ເມືອງສຸຍ) |
| 2. ເມືອງເອັ້ຽເຊ້ | (ບໍ່ຊາບວ່າແມ່ນເມືອງໃດ) |
| 3. ເມືອງລ້າງກົງ | (ເຫັນຈະແມ່ນ ລ້ານກຸງ) |
| 4. ເມືອງເທັງຊຽງ | (ເຫັນຈະແມ່ນ ເມືອງທົ່ງຊ້າງ) |
| 5. ເມືອງຊີລ້ານ | (ເຫັນຈະແມ່ນ ຊຽງລ້ານ) |
| 6. ເມືອງມົ້ງເສ | (ເມືອງແສ ຫລືເມືອງຫນອງແສ) |

ໃນບັນດາເມືອງທັງ 6 ເມືອງນີ້, ເມືອງຫນອງແສເປັນເມືອງໃຫຍ່ ແລະ ເປັນເມືອງຫລວງຂອງປະເທດ. ເຫດນັ້ນ ນາມປະເທດຂອງລາວໃນເວລານັ້ນ ຈຶ່ງຮຽກວ່າ ອານາຈັກຫນອງແສ ຫລື ນ່ານເຈົ້າ. ອານາເຂດອານາຈັກຫນອງແສສມັຍນັ້ນ ປວັດສາດຂອງຈີນກ່າວໄວ້ວ່າ:

1. ທິດພາຍັບ ຕິດກັບປະເທດຊູ້ລູ້ຝັ້ນ (ຄືປະເທດທິເບດ)
2. ທິດເຫນືອ ຕິດຕໍ່ກັບເມືອງຫຍິວເຈົ້າ
3. ທິດອາຄະເນ ຕິດຕໍ່ກັບປະເທດເກົ່າຈີ້ (ຄືປະເທດຫວຽດນາມ)
4. ທິດຕາເວັນອອກ ຕິດຕໍ່ກັບເມືອງຊຸນ (ແຂວງໄກວເຈົ້າ)